# ທະນາຄານແຫ່ງ ສປປ ລາວ ອວຍພອນເນື່ອງໃນວັນກອງທັບ



ເນື່ອງໃນໂອກາດວັນສ້າງຕັ້ງກອງທັບປະຊາຊົນລາວວິລະຊົນ ຄົບຮອບ 61 ປີ ( 20/1/1949-20/1/2010 ) ໃນວັນທີ 21 ມັງກອນຜ່ານມາ ທະນາຄານແຫ່ງ ສປປ ລາວ ເຊິ່ງນຳໂດຍທ່ານ ມິ່ງແກ້ວ ສຸທວັດດີ ຮອງຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ ພ້ອມຄະນະໄດ້ເຂົ້າອວຍພອນຄະນະພັກ - ຄະນະຍັນຊາການກອງຍັນຊາການທະຫານເມືອງ ຈັນທະບູລີ ນະຄອນຫຼວງວຽງຈັນ ເຊິ່ງໄດ້ມີການຕ້ອນຮັບຢ່າງອົບອຸ່ນຈາກພັນໂທ ອິນແປງ ສົມພາບມີໄຊ ຫົວໜ້າການທະຫານກອງບັນຊາການທະຫານ ເມືອງ ຈັນທະບູລີ ພ້ອມຄະນະ.

ທ່ານ ຮອງຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ ແລະ ທ່ານຫົວໜ້າການທະຫານກອງບັນຊາທະຫານເມືອງ ຈັນທະບູລີ ໄດ້ພ້ອມກັນຍົກຍ້ອງວິລະກຳອັນລຳເລີດ ແລະ ຕີລາຄາສູງຕໍ່ການເຄື່ອນ

ໄຫວ-ເຕີບໃຫຍ່ມີໄຊຂອງກອງທັບໃນຕະຫຼອດ 61 ປີ ໂດຍພາຍໃຕ້ການນໍາພາທີ່ປີຊາສາມາດ ແລະ ສະຫຼາດສ່ອງໃສຂອງພັກເຊິ່ງຍາມໃດກໍ່ເປັນກໍາລັງທີ່ຈົງຮັກພັກດີຕໍ່ພັກ, ຕໍ່ພາລະກິດປະຕິວັດ, ເປັນແບບຢ່າງໃຫ້ແກ່ການຈັດຕັ້ງປະຕິບັດສອງຍຸດທະສາດຂອງພັກໃນໄລຍະໃໝ່. ຈາກນັ້ນທັງສອງພາກສ່ວນຍັງໄດ້ຢືນຢັນວ່າຈະເພີ່ມທະວີຄວາມສາມັກຄີທີ່ເປັນມູນເຊື້ອໃຫ້ອອກດອກແຕກຜົນຍິ່ງໆຂຶ້ນ, ໃນໂອກາດດຽວກັນນີ້ທະນາຄານແຫ່ງ ສປປ ລາວ ຍັງໄດ້ນໍາເອົາຂອງຂັວນເພື່ອອວຍພອນມາຍັງຄະນະພັກ - ຄະນະບັນຊາການ, ນາຍ ແລະ ພົນທະຫານທີ່ປະຈໍາຢູ່ກອງບັນຊາການທະຫານເມືອງດັ່ງກ່າວ.

ຂ່າວໃຫ້ຮູ້ຕື່ມອີກວ່າ: ໃນໄລຍະດຽວກັນ ທ່ານຮອງຫົວໜ້າຫ້ອງ ການກໍ່ໄດ້ເຂົ້າອວຍພອນພະແນກ "ສໍ" ກົມ 213 ກະຊວງປ້ອງກັນປະເທດ, ຄະນະນໍາທະນາຄານແຫ່ງ ສປປ ລາວ ກໍ່ໄດ້ເຂົ້າອວຍພອນຄະນະນໍາກະຊວງປ້ອງກັນປະເທດ ແລະ ຄະນະປະທານສະຫະພັນນັກຮົບເກົ່າເຊັ່ນດຽວກັນ.